

# ຈົດໝາຍຂ່າວ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ສະບັບທີ 6

ປະຈຳໄຕມາດ ມັງກອນ - ມີນາ 2019 | VOL.6

ສະບາຍດີບັນດາທ່ານ ຈົດໝາຍຂ່າວສະບັບນີ້ ແມ່ນ ສະບັບທີ 6 ຂອງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG). ຈົດໝາຍຂ່າວຂອງພວກເຮົາແມ່ນມີຈຸດປະສົງ ເພື່ອນຳສະເໜີກ່ຽວກັບບັນດາກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດໂດຍ ກອງເລຂາກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ, ເຄືອຂ່າຍ, ຄູ່ຮ່ວມງານ ແລະ ໂຄງການລິເລີ່ມກ່ຽວກັບວຽກງານດ້ານທີ່ດິນ, ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ການສົ່ງເສີມການເຄົາລົບສິດທິຂອງຊຸມຊົນ ຕໍ່ກັບການຄອບຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

ທ່ານສາມາດຕິດຕາມຂ່າວສານນຳພວກເຮົາໄດ້ທີ່ ເວັບໄຊ້ ແລະ ເຟສບຸກ

ຄຳຄິດເຫັນ ແລະ ຄຳແນະນຳຂອງທ່ານຕໍ່ກັບຈົດໝາຍຂ່າວຂອງພວກເຮົາ ແມ່ນຈະເປັນປະໂຫຍດຢ່າງຍິ່ງເພື່ອເປັນການປັບປຸງເນື້ອຫາໃຫ້ມີຄວາມໜ້າສົນໃຈ ແລະ ສອດຄ້ອງຫຼາຍຂຶ້ນໃນສະບັບຕໍ່ໆໄປ.

ທ່ານສາມາດຕິດຕໍ່ ຫຼື ສົ່ງຄຳຄິດເຫັນຂອງທ່ານຫາເຮົາໄດ້ທີ່: co@laolandinfo.org

## ພາກເນື້ອໃນ:


- ການຈັດກອງປະຊຸມ ແລະ ການຝຶກອົບຮົມໂດຍ LIWG
- ກຸ່ມເຮັດວຽກສະເພາະໜ່ວຍງານວິຊາການ
- ກິດຈະກຳຕ່າງໆ ແລະ ກອງປະຊຸມຕ່າງໆທີ່ກອງເລຂາ LIWG ເຂົ້າຮ່ວມ
- ກິດຈະກຳຂອງສະມາຊິກ & ໂຄງການລິເລີ່ມ ຂອງ LIWG
- ເລື່ອງເລົ່າປະຈຳໄຕມາດ
- ການສື່ສານ ແລະ ແບ່ງປັນຂໍ້ມູນທາງອອນລາຍ
- ກິດຈະກຳໃນໄຕມາດຕໍ່ໜ້າ (ເມສາ – ມິຖຸນາ 2019)


## ຂໍ້ມູນສຳຄັນ:

"ຜູ້ທີ່ໄດ້ຮັບຜົນກະທົບຈາກ **ການສ້າງເຂື່ອນໄຟຟ້າ** ໃນທົ່ວປະເທດລາວ ທີ່ຖືກຍົກຍ້າຍມີຈຳນວນທັງໝົດ 200 ບ້ານ ເຊິ່ງມີເຖິງ 12,000 ຄອບຄົວ ຄິດເປັນຫົວຄົນແມ່ນທັງໝົດ **60,000** ຄົນ. ໂຄງການເຂື່ອນໄຟຟ້າ ທີ່ມີການຍົກ ຍ້າຍປະຊາຊົນຫຼາຍທີ່ສຸດ 4 ອັນດັບ ໄດ້ແກ່: ເຂື່ອນນ້ຳທາ 1, ເຂື່ອນນ້ຳເທີນ 2, ເຂື່ອນໄຊຍະບູລີ ແລະ ເຂື່ອນເທີນຫີນບູນ."

*- ແຫຼ່ງຂໍ້ມູນ: Vientiane Times/ABC Laos News*

## ເລື່ອງເດັ່ນປະຈຳໄຕມາດ...



*ຕົ້ນຊາ 400 ປີ ໃນເມືອງຜົ້ງສາລີ, ແຂວງຜົ້ງສາລີ . ພາບໂດຍ LIWG*

ຈາກການຢ້ຽມຢາມຫຼາຍພື້ນທີ່ໃນທ້ອງຖິ່ນ ພວກເຮົາໄດ້ເຫັນເຫັນຄວາມສຳຄັນ ຂອງຄວາມໝັ້ນຄົງໃນການຄອບຄອງທີ່ດິນ ຕໍ່ກັບຊາວກະສິກອນ ເພາະພວກເຂົາໄດ້ອີງໃສ່ທີ່ດິນເປັນບ່ອນຜະລິດຜົນລະປູກ ເຊັ່ນ ຊາ, ໝາກແໜ່ງ ແລະ ພືດຊະນິດອື່ນໆ ເພື່ອການດຳລົງຊີວິດ ແລະ ສ້າງລາຍໄດ້.

*ອ່ານລາຍລະອຽດໃນໜ້າທີ2.....*

# I. ການຈັດກອງປະຊຸມ ແລະ ຝຶກອົບຮົມ ໂດຍກອງເລຂາ LIWG

## 1. ການຢັ້ງມຢາມພື້ນທີ່ ສະມາຊິກ ຂອງກອງເລຂາ LIWG ໃນແຂວງຜົ້ງສາລີ

ເພື່ອເສີມສ້າງຄວາມເຂັ້ມແຂງ ແລະ ຮຽນຮູ້ກ່ຽວກັບວຽກຂອງສະມາຊິກຢູ່ໃນຂັ້ນຊຸມຊົນ ກອງເລຂາ LIWG ໄດ້ໄປຢັ້ງມຢາມພື້ນທີ່ໂຄງການ ຂອງ 2 ອົງກອນສະມາຊິກ ຄື: ອົງການຮ່ວມມືກັບປະເທດລາວ (CCL) ແລະ ໂຄງການສ້າງຄວາມເຂັ້ມແຂງດ້ານບົດບາດຍິງ-ຊາຍ ໃຫ້ແກ່ຊຸມຊົນ (COPE) ຂອງອົງການ Helvetas Laos ທີ່ມີການເຮັດວຽກຮ່ວມກັບບັນດາຊຸມຊົນຢູ່ແຂວງ ຜົ້ງສາລີ.

ຈາກການຢັ້ງມຢາມພື້ນທີ່ການເຮັດວຽກຮ່ວມກັບຊຸມຊົນຂອງສະມາຊິກ ທັງ 2 ອົງກອນ ເພື່ອປັບປຸງວິຖີຊີວິດການເປັນຢູ່ຂອງຊຸມຊົນໃຫ້ດີຂຶ້ນ ພ້ອມການສະໜັບສະໜູນໃຫ້ມີ ການປົກປ້ອງຊັບພະຍາກອນທຳມະຊາດ ແລະ ບົດບາດໜ້າທີ່ຂອງ 2 ອົງກອນດັ່ງກ່າວ ໃນການເຜີຍແຜ່ຂໍ້ມູນຂ່າວສານ ແລະ ສ້າງຄວາມອາດສາມາດໃຫ້ແກ່ຊຸມຊົນໂດຍສະເພາະແມ່ນປະເດັນກ່ຽວກັບສັນຍາກະສິກຳເຊິ່ງໄດ້ເຮັດໃຫ້ກອງເລຂາ LIWG ເຂົ້າໃຈວຽກງານຂອງສະມາຊິກແລະຊຸມຊົນດັ່ງກ່າວ ຫຼາຍຂຶ້ນ. ການໄດ້ລົງເຫັນສະພາບພື້ນທີ່ຕົວຈິງຫຼາຍແຫ່ງ ເຮັດໃຫ້ພວກເຮົາໄດ້ເຫັນເຖິງ ຄວາມສຳຄັນຂອງຄວາມໝັ້ນຄົງຂອງການຄອບຄອງທີ່ດິນ ຕໍ່ກັບບັນດາຊາວກະສິກອນ ເພາະວ່າພວກເຂົາໄດ້ອີງໃສ່ ທີ່ດິນ ໃນການຜະລິດດ້ານກະສິກຳ ເປັນຕົ້ນແມ່ນ ຊາ ແລະ ການປູກໝາກແໜ່ງ ແລະ ພືດອື່ນໆ ເພື່ອອີງໃສ່ຜົນລະປູກດັ່ງກ່າວໃນການດຳລົງຊີວິດ ແລະ ການສ້າງລາຍໄດ້. ເຖິງຢ່າງໃດກໍ່ຕາມ ການລົງພື້ນທີ່ຄັ້ງນີ້ ພວກເຮົາກໍ່ໄດ້ເຫັນເຖິງ ບັນຫາຫຼາຍຢ່າງທີ່ກ່ຽວຂ້ອງກັບ ຄວາມຂັດແຍ້ງດ້ານທີ່ດິນລະຫວ່າງປະຊາຊົນ ແລະ ໜ່ວຍງານພາກລັດ ແລະ ບໍລິສັດນັກລົງທຶນ ເຊິ່ງສິ່ງດັ່ງກ່າວນັ້ນ ກໍ່ເປັນຄວາມທ້າທາຍຫຼາຍຂອງສະມາຊິກໃນການເຮັດວຽກປະເດັນດັ່ງກ່າວ. ໃນການຢັ້ງມຢາມພື້ນທີ່ຄັ້ງນີ້ ກອງເລຂາ LIWG ກໍ່ຍັງໄດ້ມີການນຳສະເໜີກ່ຽວກັບຄວາມສຳຄັນຂອງປະຕິທິນກົດໝາຍ ເພື່ອໃຊ້ເປັນເຄື່ອງມືສື່ສານອັນໜຶ່ງໃນການເຜີຍແຜ່ຂໍ້ມູນ ແລະ ສ້າງຄວາມອາດສາມາດໃຫ້ແກ່ຊຸມຊົນ ກ່ຽວກັບກົດໝາຍ ເພື່ອນຳໃຊ້ກົດໝາຍໃນການປົກປ້ອງສິດຂອງຕົນ ທີ່ຕິດພັນກັບສິດທິທາງດ້ານຊັບພະຍາກອນທຳມະຊາດ ແລະ ການເຂົ້າເຖິງຂະບວນຍຸຕິທຳ.

ການລົງພື້ນທີ່ຂອງກອງເລຂາຄັ້ງນີ້ ແມ່ນພື້ນທີ່ 2 ເມືອງ ຄື ເມືອງຍອດອູ ແລະ ເມືອງ ຜົ້ງສາລີ ຂອງແຂວງຜົ້ງສາລີ ລະຫວ່າງວັນທີ 24 -29 ມັງກອນ 2019.

## 2. ງານແລກປ່ຽນບົດຮຽນກ່ຽວກັບ ການວາງແຜນທາງດ້ານພູມີສາດຢ່າງມີຍຸດທະສາດ ສຳລັບເສັ້ນໂຄງການ ເສັ້ນທາງລົດໄຟລາວ-ຈີນ



ການອອກແບບພູມີສາດ, ພາບໂດຍ ມະຫາວິທະຍາໄລຊ່ອງກົງ

ເພື່ອແລກປ່ຽນຄວາມຮູ້ ກ່ຽວກັບມຸມມອງດ້ານການອອກແບບສະຖາປັດ ເພື່ອເປັນສ່ວນໜຶ່ງໃນການວາງແຜນພູມີສາດຢ່າງມີຍຸດທະສາດ ຂອງເສັ້ນທາງລົດໄຟລາວ-ຈີນ LIWG ແລະ ຄະນະສະຖາປັດ ຂອງມະຫາວິທະຍາໄລຮ່ອງກົງ ໄດ້ຮ່ວມກັນຈັດງານແລກປ່ຽນບົດຮຽນກ່ຽວກັບ **"ການວາງແຜນທາງດ້ານພູມີສາດຢ່າງມີຍຸດທະສາດສຳລັບເສັ້ນໂຄງການເສັ້ນທາງລົດໄຟລາວ-ຈີນ."**

ໃນງານແລກປ່ຽນບົດຮຽນຄັ້ງນີ້ ອາຈານ ແລະ ບັນດານັກສຶກສາ ຈາກມະຫາວິທະຍາໄລຮ່ອງກົງ ໄດ້ມີການນຳສະເໜີ ກ່ຽວກັບ ແຜນຍຸດທະສາດຂອງພວກເຂົາ ພ້ອມກັບນຳສະເໜີພາບລວມປະເດັນການພັດທະນາທີ່ກ່ຽວຂ້ອງກັບທີ່ດິນ ຕາມເສັ້ນທາງລົດໄຟ. ເຊິ່ງໃນການ ນຳສະເໜີພວກເຂົາໄດ້ສະເໜີແນະ ກ່ຽວກັບບັນດາແຜນຍຸດທະສາດຕ່າງໆທີ່ພວກເຂົາໄດ້ພັດທະນາຂຶ້ນມາ ເຊິ່ງລວມມີ ແຜນແມ່ບົດແຫ່ງຊາດ, ແຜນການຫຼຸດຜ່ອນຄວາມສ່ຽງຕໍ່ກັບໂຄງລ່າງພື້ນຖານ ແລະ ນະໂຍບາຍ.

ນອກນັ້ນ ນັກສຶກສາ ຍັງມີໄດ້ມີການນຳສະເໜີຫຼາຍຫົວຂໍ້ກ່ຽວ ການລົງທຶນຂອງຈີນໃນປະເທດລາວ ທີ່ສ້າງຜົນກະທົບຕໍ່ກັບການປ່ຽນແປງ ການຄຸ້ມຄອງທີ່ດິນ, ກະສິກຳ, ວິຖີຊີວິດ ແລະ ເສດຖະກິດຂອງຄົນທ້ອງຖິ່ນ ຢູ່ທາງພາກເໜືອຂອງປະເທດລາວ.

ຜ່ານການນຳສະເໜີຫຼາຍປະເດັນ ອາຈານຈາກຄະນະສະຖາປັດ ຂອງ ວິທະຍາໄລຮ່ອງກົງ ໄດ້ກ່າວວ່າ ການວາງແຜນດ້ານຍຸດທະສາດນັ້ນ ບໍ່ແມ່ນ ການນຳໄປປະຕິບັດໂດຍກົງສະເໜີໄປ. ບັນດາແຜນຍຸດທະສາດທີ່ພວກເຮົານຳສະເໜີນັ້ນ ເປັນການຮຽນຮູ້ ໃນການສ້າງເປັນແນວຄິດຕ່າງໆ ເພື່ອ ເປັນການເຜີຍແຜ່ ແລະ ໂຕ້ແຍ້ງກັນກ່ຽວກັບ ບັນຫາເລັ່ງດ່ວນທາງດ້ານສິ່ງແວດລ້ອມ ແລະ ການພັດທະນາ ເຊິ່ງເປັນການແນະນຳສະເໜີຊ່ອງທາງໃນການແກ້ໄຂບັນຫາ ແຕ່ບໍ່ໄດ້ໝາຍຄວາມວ່າ ສິ່ງທີ່ໄດ້ນຳສະເໜີເປັນທາງອອກຂອງບັນຫານັ້ນໆ.

ງານແລກປ່ຽນນີ້ ແມ່ນໄດ້ຈັດຂຶ້ນໃນວັນທີ 7 ມີນາ 2019 ໂດຍມີບັນດາສະມາຊິກຂອງ LIWG, ອາຈານ ແລະ ນັກສຶກສາຈາກ ຄະນະສະຖາປັດ ຂອງມະຫາວິທະຍາໄລຮ່ອງກົງ ເຂົ້າຮ່ວມງານຄັ້ງນີ້.

- ເບິ່ງພາບໃນງານແລກປ່ຽນ ໄດ້ທີ່ນີ້: https://youtu.be/TdQ1FObQ69U
- ເບິ່ງວິດີໂອກ່ຽວກັບ ແຜນຍຸດທະສາດທີ່ສ້າງຂຶ້ນໂດຍນັກສຶກສາມະຫາວິທະຍາໄລຮ່ອງກົງໄດ້ທີ່ນີ້: https://vimeo.com/312541576

## 3. ການຝຶກອົບຮົມ Do Not Harm ໃນການຄຸ້ມຄອງທີ່ດິນ





ເພື່ອເປັນການແນະນຳກອບແນວຄິດ "Do No Harm" (ຄືການ ຄຳນຶງເຖິງຄວາມປອດໄພໄວ້ກ່ອນ) ໂດຍສະເພາະກ່ຽວກັບ "ສິ່ງທີ່ສ້າງໃຫ້ເກີດຄວາມເຊື່ອມໂຍງ ແລະ ສິ່ງທີ່ພາໃຫ້ເກີດການແຕກແຍກ" ເພື່ອເປັນໂຕຊ່ວຍໃນການບໍລິຫານບັນດາໂຄງການທີ່ກ່ຽວຂ້ອງກັບການແກ້ໄຂຄວາມຂັດແຍ້ງດ້ານທີ່ດິນ. ດັ່ງນັ້ນ LIWG ໄດ້ຈັດການຝຶກອົບຮົມ ຫົວຂໍ້ດັ່ງກ່າວ ແກ່ບັນດາສະມາຊິກໂດຍສະເພາະ ພະນັກງານອົງກອນທີ່ເຮັດວຽກໃນພາກສະໜາມ ທີ່ເຮັດວຽກກັບຊຸມຊົນໃນລາວ.

ວິທີການໃນການຝຶກອົບຮົມຄັ້ງນີ້ ແມ່ນມີຄວາມຫຼາກຫຼາຍ ເຊິ່ງຊ່ວຍໃຫ້ຜູ້ເຂົ້າຮ່ວມທີ່ມາຈາກອົງກອນທີ່ຕ່າງກັນ ສາມາດຮຽນຮູ້ ແລະ ແລກປ່ຽນປະສົບການກັນໄດ້ ພ້ອມທັງຊ່ວຍໃຫ້ພວກເຂົາເຂົ້າໃຈວິທີການ "Do No Harm" ເພື່ອທີ່ຈະສາມາດນຳໃຊ້ເຂົ້າໃນການເຮັດວຽກຂອງຕົນ ໂດຍສະເພາະທີ່ກ່ຽວຂ້ອງກັບບັນຫາດ້ານຄວາມຂັດແຍ້ງດ້ານທີ່ດິນ.

ໃນການຝຶກອົບຮົມດັ່ງກ່າວ ຍັງໄດ້ມີການນຳສະເໜີກໍລະນີສຶກສາກ່ຽວກັບ "Do No Harm" 2 ກໍລະນີຄື: ກໍລະນີ ການປະມົງ ຢູ່ປະເທດກຳປູເຈຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສໃນປະເທດລາວ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມເຫັນພາບຊັດເຈນ ແລະ ເຂົ້າໃຈກ່ຽວກັບ ສິ່ງທີ່ເກີດຂຶ້ນຕົວຈິງ ທີ່ກ່ຽວຂ້ອງກັບການນຳໃຊ້ວິທີການແບບ "Do No Harm"

ນອກຈາກນັ້ນ ບັນດາຜູ້ເຂົ້າຮ່ວມຍັງມີການເຮັດກິດຈະກຳພາຍໃນກຸ່ມ ເຮັດໃຫ້ມີການນຳສະເໜີຫຼາກຫຼາຍແນວຄວາມຄິດເກີດຂຶ້ນ ເພື່ອແລກປ່ຽນ ແລະ ຮຽນຮູ້ເຊິ່ງກັນ ແລະ ກັນ ໃນການນຳໃຊ້ຫຼັກການ "Do No Harm" ເຂົ້າໃນວຽກຂອງຜູ້ເຂົ້າຮ່ວມໃນຂັ້ນຊຸມຊົນ.

ການຝຶກອົບຮົມຄັ້ງນີ້ແມ່ນຈັດຂຶ້ນໃນວັນທີ 19 ມີນາ 2019 ແລະ ມີບັນດາສະມາຊິກຂອງLIWGເຂົ້າຮ່ວມ.

ຮຽນຮູ້ເພີ່ມເຕີມກ່ຽວກັບວິທີການ Do No Harm ຈາກ:

- ຄູ່ມືການຝຶກອົບຮົມ Do No Harm 2016
- Do No Harm ກ່ຽວກັບສິດທິດ້ານທີ່ດິນ ແລະ ສິດທິດ້ານຊັບສິນ

## 4. ກອງປະຊຸມໃຫຍ່ປະຈຳປີ 2019 ຂອງເຄືອຂ່າຍ LIWG (AGM)

ເພື່ອເປັນການລາຍງານວຽກງານໃນໄລຍະປີຜ່ານມາ ແລະ ແຜນວຽກຂອງ LIWG ກອງປະຊຸມໃຫຍ່ປະຈຳປີ 2019 ແມ່ນໄດ້ຈັດຂຶ້ນ ໂດຍມີບັນດາສະມາຊິກຫຼັກເຂົ້າຮ່ວມກອງປະຊຸມ. ເຊິ່ງກອງປະຊຸມຄັ້ງນີ້ແມ່ນເປັນໂອກາດແກ່ບັນດາສະມາຊິກໄດ້ພົບປະ ແລະ ສົນທະນາກ່ຽວກັບວຽກງານຂອງເຄືອຂ່າຍ LIWG.

ໃນກອງປະຊຸມຄັ້ງນີ້ ກອງເລຂາຍັງໄດ້ນຳສະເໜີຜົນໄດ້ຮັບຈາກການປະເມີນວຽກງານຂອງ LIWG ໃນໄລຍະຜ່ານມາ ເພື່ອເປັນການເປີດໂອກາດໃຫ້ບັນດາສະມາຊິກໄດ້ສະແດງຄວາມຄິດເຫັນ ແລະ ຄຳແນະນຳ ຈາກຜົນຂອງການປະເມີນຜົນຄັ້ງນີ້ ເພື່ອເຮັດໃຫ້ເຄືອຂ່າຍ LIWG ເປັນເຄືອຂ່າຍທີ່ເຮັດວຽກປະເດັນທີ່ດິນໃນລາໃຫ້ມີຄວາມເຂັ້ມແຂງຫຼາຍຂຶ້ນ.

ຈາກບັນດາຄຳຄິດເຫັນທີ່ໄດມີການນຳສະເໜີໃນກອງປະຊຸມຈາກບັນດາສະມາຊິກ ແມ່ນຈະໄດ້ນຳເອົາເປັນປັບໃສ່ຍຸດທະສາດຂອງ LIWG ເພື່ອຮັບປະການຄວາມໝັ້ນໃຈໃນການເປັນຕົວແທນໃຫ້ແກ່ ບັນດາສະມາຊິກ ແລະ ສ້າງພື້ນທີ່ແຫ່ງການຮຽນຮູ້ ແລະ ຜັນດັນໃຫ້ເກີດການປ່ຽນແປງກ່ຽວກັບເລື່ອງສິດທິທີ່ດິນໃນລາວ. ນອກນີ້ ຍັງເປັນການໂອ້ລົມ ແລກປ່ຽນຄຳຄິດເຫັນຮ່ວມກັບບັນດາສະມາຊິກວ່າ ສະມາຊິກເອງສາມາດປະກອບສ່ວນ ແລະ ເຮັດວຽກຮ່ວມກັບກອງເລຂາແນວໃດ ເພື່ອໃຫ້ມີປະສິດທິພາບຫຼາຍຂຶ້ນ ແລະ ເພື່ອເປັນສະໜັບສະໜູນເຊິ່ງກັນ ແລະ ກັນ.

ເນື່ອງຈາກໄດ້ມີ ຄະນະຊີ້ນຳຂອງ LIWG 2 ທ່ານ ໄດ້ຢຸດຕິບົດບາດໃນການເປັນ ຄະນະຊີ້ນຳຂອງ LIWG. ດັ່ງນັ້ນໃນກອງປະຊຸມ AGM ຄັ້ງນີ້ ຈຶ່ງໄດ້ມີການເລືອກເອົາ ຄະນະຊີ້ນຳ LIWG ໃໝ່ 2 ທ່ານ ເພື່ອເຂົ້າມາເປັນຄະນະຊີ້ນຳ ກອງເລຂາ ແລະ ເຄືອຂ່າຍ LIWG.

ນອກຈາກນັ້ນ ທາງທີມງານ ໂຄງການ LIFE ກໍ່ຍັງໄດ້ນຳສະເໜີຜົນສຳເລັດຂອງໂຄງການໃນໄລຍະຜ່ານມາ ພ້ອມກັບນຳສະເໜີແຜນໃນຕໍ່ໜ້າ ໂດຍສະເພາະ ການພັດທະຄູ່ມືໃນການຝຶກອົບຮົມ.

ກອງປະຊຸມ AGM ຄັ້ງນີ້ ແມ່ນຈັດຂຶ້ນໃນວັນທີ 11 ກຸມພາ 2019 ແລະ ມີບັນດາສະມາຊິກຫຼັກຂອງ LIWG ເຂົ້າຮ່ວມກອງປະຊຸມ.

## 5. ກອງປະຊຸມ ຄະນະຊີ້ນຳຂອງ LIWG

ເພື່ອເປັນການລາຍງານວຽກງານ ແລະ ຄວາມຄືບໜ້າຕ່າງໆຂອງວຽກຕ່າງໆຂອງ ເຄືອຂ່າຍ, ກອງປະຊຸມຄະນະຊີ້ນຳ LIWG ຈຶ່ງໄດ້ຈັດຂຶ້ນ ເຊິ່ໄດ້ຈັດຂຶ້ນເປັນປະຈຳໃນແຕ່ລະເດືອນ. ກອງປະຊຸມດັ່ງກ່າວຍັງມີຂຶ້ນຫາກກອງເລຂາ ມີວຽກງານດ່ວນທີ່ຕ້ອງການຄຳເຫັນ ແລະ ຄຳແນະນຳຈາກ ຄະນະຊີ້ນຳ ກ່ຽວກັບວຽກງານຕ່າງໆຂອງເຄືອຂ່າຍ.

ໃນໄຕມາດນີ້ ກອງປະຊຸມຄະນະຊີ້ນຳຂອງ LIWG ໄດ້ມີການຈັດຂຶ້ນ 3 ຄັ້ງ (ເດືອນລະຄັ້ງ).

## II. ກຸ່ມເຮັດວຽກສະເພາະ/ໜ່ວຍງານວິຊາການ

### 1. ກຸ່ມທີ່ປຶກສາ ກ່ຽວກັບການປັບປຸງກົດໝາຍທີ່ດິນ

ກຸ່ມທີ່ປຶກສາສະເພາະການປັບປຸງ ກົດໝາຍທີ່ດິນ ມີການພົບປະກັນເປັນປະຈໍາ ເພື່ອແຈ້ງຄວາມຄືບໜ້າ ແລະ ປຶກສາຫາລື ກ່ຽວກັບຂະບວນການການປັບປຸງກົດໝາຍທີ່ດິນ. ທາງກຸ່ມໄດ້ເຮັດວຽກຮ່ວມກັບ ຄະນະກໍາມະການກອງເລຂາຮ່າງປັບປຸງກົດໝາຍທີ່ດິນຢ່າງໃກ້ຊິດ ເພື່ອເປັນການເພີ່ມລາຍລະອຽດບາງຄໍາແນະນໍາ ແລະ ຊ່ວຍກອງເລຂາ ໃນການດໍາເນີນງານໃນວຽກງານ ການປັບປຸງກົດໝາຍທີ່ດິນ ໂດຍສະເພາະ ບັນດາຄໍາແນະນໍາທີ່ທາງ LIWG ໄດ້ຮວບຮວມຈາກບັນດາສະມາຊິກໃນກຸ່ມ ແລະ ເພື່ອທີ່ຈະນໍາສະເໜີແກ່ ສະພາແຫ່ງຊາດ ເພື່ອພິຈາລະນາ ຮັບເອົາ ບັນດາຄໍາແນະນໍາເຫຼົ່ານັ້ນເຂົ້າໃນການປັບປຸງ ກົດໝາຍທີ່ດິນ.
ທາງກຸ່ມ ຈະມີການເຮັດວຽກຮ່ວມກັນໃນການສະຫຼຸບຂໍ້ສະເໜີແນະຫຍໍ້ ເພື່ອກຽມນໍາສະເໜີ ບັນດາຂໍ້ສະເໜີແນະດັ່ງກ່າວ ໃນກອງປະຊຸມກາງສະໄໝສາມັນຂອງສະພາແຫ່ງຊາດ ທີ່ຈະມີການຈັດຂຶ້ນໃນທ້າຍເດືອນ ພຶດສະພາ ປີນີ້.
**ຂໍ້ມູນສໍາຄັນ:** ກົດໝາຍທີ່ດິນ ສະບັບປັບປຸງ ແມ່ນມີແຜນທີ່ຈະນໍາສະເໜີເພື່ອໃຫ້ສະພາຮັບຮອງເອົາໃນກອງປະຊຸມສະໄໝສາມັນຄັ້ງທີ 7 ຂອງສະພາແຫ່ງຊາດທີ່ຈະໄດ້ຈັດຂຶ້ນໃນລະຫວ່າງ ວັນທີ 5 - 25 ມິຖຸນາ ປີ 2019 ນີ້.

### 2. ໂຄງການ ປຶ້ມສັງລວມປະຕິທິນກົດໝາຍ 10 ປີ

ເພື່ອເປັນການ ສັງລວມບັນດາປະຕິທິນກົດໝາຍທີ່ໄດ້ມີການພັດທະນາມາໄດ້ 10 ປີ ຈາກປີ 2010 – 2019 ເພື່ອເກັບກໍາໄວ້ເປັນ ປຶ້ມສັງລວມປະຕິທິນກົດໝາຍ ທາງກອງເລຂາ LIWG ໄດ້ມີການປະສານງານ ແລະ ເຮັດວຽກຮ່ວມກັບ ທີມງານພັດທະນາປະຕິທິນກົດໝາຍ ເພື່ອທີ່ຈະວາງແຜນ ແລະ ປຶກສາຫາລື ແນວທາງໃນການພັດທະນາເປັນປຶ້ມດັ່ງກ່າວ.

ຫຼັງຈາກມີການປະຊຸມ ແລະ ເກັບກໍາຄໍາຄິດເຫັນຈາກບັນດາສະມາຊິກໄດ້ແລ້ວ ທີມງານຈະມີການຈັດກອງປະຊຸມປຶກສາຫາລື ໃນເດືອນ ພຶດສະພາ 2019 ເພື່ອປຶກສາຫາລື ກ່ຽວກັບກຸ່ມເປົ້າໝາຍຂອງໂຄງການ ປຶ້ມສັງລວມນີ້ ໂດຍສະເພາະ ຊ່ອງທາງໃນການເຜີຍແຜ່ປຶ້ມສັງລວມດັ່ງກ່າວໃນຫຼາຍໆຂັ້ນ ໂດຍສະເພາະ ໃນຂັ້ນຊຸມຊົນ.

ໂຄງການປຶ້ມສັງລວມນີ້ ແມ່ນໄດ້ຮັບການສະໜັບໜູນຈາກ ໂຄງການ Luras ຂອງອົງການ Helvetas Laos, ເຊິ່ງ ທີມງານພັດທະນາປະຕິທິນກົດໝາຍ ຈະເປັນກຸ່ມຫຼັກໃນການພັດທະນາປຶ້ມສັງລວມດັ່ງກ່າວ.




## III. ກິດຈະກໍາຕ່າງໆ ແລະ ກອງປະຊຸມຕ່າງໆທີ່ກອງເລຂາ LIWG ເຂົ້າຮ່ວມ

### 1. ກອງປະຊຸມປຶກສາຫາລືຫຼາຍພາກສ່ວນ ກ່ຽວກັບ ສິ່ງແວດລ້ອມ ແລະ ທຸລະກິດກະສິກໍາ ໃນປະເທດລາວ: ໂຄງການ E-RAI




ກອງປະຊຸມປຶກສາຫາລືຫຼາຍພາກສ່ວນກ່ຽວກັບສິ່ງແວດລ້ອມ ແລະ ທຸລະກິດກະສິກໍາໃນປະເທດລາວ ໄດ້ມີການຈັດຂຶ້ນເພື່ອ ເປັນການນໍາສະເໜີກ່ຽວກັບຊ່ອງວ່າງຂອງກອບກົດໝາຍທີ່ກ່ຽວຂ້ອງກັບລະບຽບທາງດ້ານສິ່ງແວດລ້ອມ ແລະ ທຸລະກິດກະສິກໍາ ພ້ອມດ້ວຍນໍາສະເໜີບົດຄົ້ນຄວ້າຈາກພາກສະໜາມ ເພື່ອໃຫ້ພົນເປັນຍຸດທະສາດຕ່າງໆ ເພື່ອໃຫ້ເກີດມີການນໍາເອົາໄປໃຊ້ ໂດຍຜູ້ທີ່ມີສ່ວນໄດ້ຮັບຜົນ (ນັກລົງທຶນທຸລະກິດກະສິກໍາ, ຊຸມຊົນ ແລະ ພາກລັດ) ເພື່ອເປັນແນວທາງໃນການວາງແຜນ, ຈັດການ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມຈາກການກວດກາ.
ໂຄງການ E-RAI ແມ່ນມີການດໍາເນີນປະຕິບັດງານໂດຍ ອົງການບ້ານຈຸດສຸມສາກົນ (VFI) ໂດຍການສະໜັບສະໜູນຈາກ ໜ່ວຍງານທີ່ດິນຂອງ GIZ ໃນປະເທດລາວ ໂດຍມີການດໍາເນີນງານຮ່ວມກັບ ກະຊວງແຜນການ ແລະ ການລົງທຶນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ແຫ່ງມະຫາວິທະຍາໄລແຫ່ງຊາດ, LIWG ແລະ ໂຄງການ LIFE.
ການກວດກາຄັ້ງນີ້ ແມ່ນຈະມີການນໍາໄປປັບໃຊ້ຕໍ່ກັບວຽກງານທີ່ກ່ຽວຂ້ອງ.

ສໍາລັບໂຄງການນີ້ ກອງເລຂາ ແມ່ນເປັນສ່ວນໜຶ່ງໃນການປະສານງານກັບບັນດາສະມາຊິກຂອງ LIWG ໃນການວິເຄາະຂໍ້ມູນນີ້.

ອ່ານບົດສະຫຼຸບຫຍໍ້ກ່ຽວກັບໂຄງການນີ້ໄດ້ທີ່: ພາອັງກິດ ແລະ ພາສາລາວ

## 2. ກອງປະຊຸມປຶກສາຫາລື ຜົນໄດ້ຮັບຈາກການສຶກສາ ກ່ຽວກັບການຄິດໄລ່ຄ່າຊົດເຊີຍແກ່ຜູ້ທີ່ໄດ້ຮັບຜົນກະທົບ

ສະມາຄົມ ອະນຸລັກສັດປ່າ (WCA) ໄດ້ມີການຈັດ ກອງປະຊຸມປຶກສາຫາລື ຜົນໄດ້ຮັບຈາກການສຶກສາ ເພື່ອເປັນການເກັບກຳເອົາຄຳຄິດເຫັນ ນຳໄປປັບປຸງແກ້ໄຂ ບົດສຶກສາ ຈາກການສຶກສາຄົ້ນ ຄວ້າກ່ຽວກັບ ການຄິດໄລ່ລຽງຄ່າຊົດເຊີຍແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ: ກໍລະ ນີສຶກສາ ໂຄງການເຂື່ອນນ້ຳເທີນ 2 ແລະ ນ້ຳທາງຽບ 1 ຂຶ້ນ.



ເຂື່ອນນ້ຳເທີນ2/ຮູບໂດຍ Asia ADF

ເຊິ່ງຜົນໄດ້ຮັບຈາກການສຶກສາຂອງບົດຄົ້ນຄວ້ານີ້ແມ່ນ ຈະໄປປະກອບສ່ວນແກ່ວຽກງານການຕີຄວາມໝາຍຂອງກອບນິຕິກຳຂອງໄມ້ທ່ອນ (TLD2); ແລະ ບັນດາຜົນຈາກການສຶກສາທ້າຍສຸດແມ່ນຈະປະກອບສ່ວນເຂົ້າໃນຂະບວນການຂອງ FLEGT VPA, ໂດຍສະເພາະ ແມ່ນເນັ້ນໃສ່ການກຳນົດນິຍາມຂອງ TLD 2 (ໃນເຂດປ່າສະຫງວນ).

ສຳລັບບົດຄົ້ນຄວ້ານີ້ແມ່ນປະກອບມີ 2 ກໍລະນີສຶກສາຄື: ໂຄງການເຂື່ອນນ້ຳເທີນ 2 ແລະ ນ້ຳທາງຽບ 1 ເພື່ອສຶກສາເບິ່ງບົດຮຽນຈາກ 2 ໂຄງການດັ່ງກ່າວ ກ່ຽວກັບການໄລ່ລຽງຄ່າຊົດເຊີຍແຜ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການດັ່ງກ່າວ. ເຊິ່ງເຫດຜົນໃນການເລືອກເອົາ 2 ໂຄງການດັ່ງກ່າວເປັນກໍລະນີສຶກສານັ້ນກໍ່ເພາະວ່າ ຢາກຈະໃຫ້ເຫັນຮູບແບບການຄິດໄລ່ຄ່າຊົດເຊີຍທີ່ຕ່າງກັນຄື: ເຂື່ອນ ນ້ຳເທີນ 2 ແມ່ນມີການຄິດໄລ່ຄ່າຊົດເຊີຍ ໂດຍອີງໃສ່ ດຳລັດເລກທີ 192/ນຍ (ເຊິ່ງປັດຈຸບັນແມ່ນມີການປັບປຸງ ແລ້ວປ່ຽນມາເປັນ ດຳລັດເລກທີ 84/ນຍ) ການຊົດເຊີຍ ແລະ ການຍົກຍ້າຍຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາ. ແລະ ສຳລັບເຂື່ອນ ນ້ຳທາງຽບ 1 ແມ່ນນຳສະເໜີວິທີການຄິດໄລ່ຄ່າຊົດເຊີຍແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການໃນໄລຍະທີ່ປະເທດລາວຍັງບໍ່ທັນມີ ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ຄືກັບເຂື່ອນ ນ້ຳເທີນ 2 ເພື່ອໃຫ້ເຫັນເຖິງຄວາມແຕກຕ່າງກັນ ໃນຫຼາຍໆປັດໃຈ. ບົດສຶກສາແມ່ນຍັງຢູ່ໃນຂັ້ນຕອນການປັບປຸງ ເຊິ່ງຫຼັງຈາກສະຫຼຸບແລ້ວກໍ່ຈະມີການສະເໜີໃຫ້ EU-FLEGT ໃນລາວ ຮັບພິຈາລະນາ.

ກອງປະຊຸມນີ້ແມ່ນຈັດຂຶ້ນ ໂດຍ ສະມາຄົມ ອະນຸລັກສັດປ່າ (Wildlife Conservation Association) ແລະ ມີຫຼາຍພາກສ່ວນທັງຄູ່ຮ່ວມການ ແລະ ພາກລັດເຂົ້າຮ່ວມກອງປະຊຸມຄັ້ງນີ້.

# IV. ໂຄງການລິເລີ່ມ ແລະ ສະມາຊິກ ຂອງ LIWG

## 1. ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ (LIFE)

### 1.1). ພັດທະນາຄູ່ມື ການລົງທຶນແບບມີຄວາມຮັບຜິດຊອບ

ເພື່ອພັດທະນາຄູ່ມື ການລົງທຶນແບບມີຄວາມຮັບຜິດຊອບຂອງພາກເອກະຊົນໃນການດຳເນີນທຸລະກິດໃຫ້ ແກ່ໂຄງການ Luras, ທາງ LIWG ແລະ ໂຄງການ LIFE ໄດ້ມີການຈັດກອງປະຊຸມເພື່ອປຶກສາຫາລື ຕໍ່ແນວທາງໃນການພັດທະນາຄູ່ມື ຄວາມຮັບຜິດຊອບຂອງພາກເອກະຊົນໃນການດຳເນີນທຸລະກິດ ແລະ ການເຫັນດີເຫັນພ້ອມຢ່າງອິດສະຫຼະໂດຍການຮັບຮູ້ລ່ວງໜ້າ (FPIC).




ເຊິ່ງຈຸດປະສົງໃນການຈັດກອງປະຊຸມຄັ້ງນີ້ແມ່ນເພື່ອ :

- ເພື່ອນຳສະເໜີ ແລະ ຜ່ານຮ່າງຄູ່ມືຝຶກອົບຮົມກ່ຽວກັບ ຄວາມຮັບຜິດຊອບຂອງພາກເອກະຊົນໃນການດຳເນີນທຸລະກິດ ແລະ ການເຫັນດີເຫັນພ້ອມຢ່າງອິດສະຫຼະໂດຍການຮັບຮູ້ລ່ວງໜ້າ ທີ່ທາງໂຄງການ ໄລຟ໌ ໄດ້ພັດທະນາຂຶ້ນ
- ເພື່ອແລກປ່ຽນ ແລະ ນຳເອົາຄຳຄິດເຫັນຂອງຜູ້ເຂົ້າຮ່ວມໃນການປັບປຸງຮ່າງຄູ່ມືຝຶກອົບຮົມໃຫ້ສົມບູນ

ກອງປະຊຸມດັ່ງກ່າວ ແມ່ນດຳເນີນໄປດ້ວຍບັນຍາກາດຟົດຟື້ນ ໃນການແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ເພື່ອເປັນການປັບປຸງຮ່າງຄູ່ມືໃນການ ຝຶກອົບຮົມຄັ້ງນີ້ໃຫ້ມັນສົມບູນຢ່າງຮອບດ້ານຫຼາຍຂຶ້ນ.

ຫຼັງຈາກກອງປະຊຸມຄັ້ງນີ້ ທາງທີມງານຈະໄດ້ມີລວບລວມບັນດາຄຳຄິດເຫັນດັ່ງກ່າວ ເຂົ້າໄປໃນແຜນພັດທະນາຄູ່ມື ແລະ ກໍ່ຈະມີການລາຍງານຜົນຄືນກ່ອນທີ່ຈະມີການນຳໃຊ້ຄູ່ມືຝຶກອົບຮົມນີ້ກັບຊຸມຊົນທ້ອງຖິ່ນ, ບໍລິສັດ, ໜ່ວຍງານພາກລັດ ແລະ ຄູ່ຮ່ວມງານອົງການຈັດຕັ້ງທາງສັງຄົມໃນລາວ.

ກອງປະຊຸມຄັ້ງນີ້ ແມ່ນໄດ້ຈັດຂຶ້ນໃນວັນທີ 20 ມີນາ 2019 ແລະ ມີບັນດາ ສະມາຊິກ LIWG ແລະ ຄູ່ຮ່ວມງານຂອງ Luras ທັງອົງການຈັດຕັ້ງທາງສັງຄົມ ແລະ ພາກລັດເຂົ້າຮ່ວມ.

## 1.2). ການຝຶກອົບຮົມແບບໃກ້ຊິດຫົວຂໍ້ໃຫ້ແກ່ອົງການ WWF Laos ໃນແຂວງ ສາລະວັນ

ເພື່ອເປັນການແນະນຳວິທີການ ແລະ ເຄື່ອງມື ພ້ອມທັງເປັນການສ້າງຄວາມອາດສາມາດໃຫ້ແກ່ ພະນັກງານຂອງໂຄງການ WWF Laos , ທີມງານ LIFE ໄດ້ມີການຈັດຝຶກອົບຮົມແບບໃກ້ຊິດ ໃຫ້ແກ່ອົງການ WWF Laos ໃນຫົວຂໍ້: **ທັກສະພື້ນຖານຂອງການຮຽນຮູ້ທີ່ຫຼາກຫຼາຍ ເພື່ອນຳໃຊ້ເຂົ້າໃນການອຳນວຍຄວາມສະດວກສຳລັບຄູຝຶກ ແລະ ສິດຂອງປະຊາຊົນລາວ ໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຕາມປະເພນີ ແລະ ການແກ້ໄຂຂໍ້ຂັດແຍ່ງ** ໃນແຂວງສາລະວັນ ໃນລະຫວ່າງວັນທີ 4 - 8 ມີນາ 2019.

**“ ຜູ້ເຂົ້າຮ່ວມໃນການຝຶກອົບຮົມໃນຄັ້ງນີ້ຕ່າງກໍ່ ປະທັບໃຈຕໍ່ກັບວິທີການຝຶກອົບຮົມແບບໃໝ່ ທີ່ມີການນຳໃຊ້ໃນຊ່ວງການຝຶກອົບຮົມເຊັ່ນ: ເກມ, ການໃຊ້ໂພສເຕີ, ການສົນທະນາໃນກຸ່ມ ແລະ ວິດີໂອ ເພື່ອຊ່ວຍໃຫ້ເຂົ້າໃຈກ່ຽວກັບເນື້ອຫາ ຂອງການຝຶກອົບຮົມໄດ້ດີຂຶ້ນ ແລະ ຍັງເປັນການເປີດໂອກາດໃຫ້ເກີດມີການສົນທະນາກ່ຽວກັບປະເດັນ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດທີ່ເກີດຂຶ້ນໃນພື້ນທີ່ ໄດ້ຢ່າງດີດ້ວຍ.”**

*- ຄູຝຶກ LIFE -*

ຫຼັງຈາກການຝຶກອົບຮົມ ບັນດາຜູ້ເຂົ້າຮ່ວມໄດ້ສະແດງຄຳຄິດເຫັນວ່າ ພວກເຂົາໄດ້ຮຽນຮູ້ວິທີການຫຼາຍຢ່າງທີ່ສາມາດນຳໃຊ້ເຂົ້າໃນການຝຶກອົບຮົມ ໃນຂັ້ນທ້ອງຖິ່ນ ໂດຍສະເພາະການນຳໃຊ້ວິທີການທີ່ໄດ້ຮຽນຮູ້ຈາກການຝຶກອົບຮົມເຜີຍແຜ່ໃຫ້ຂໍ້ມູນດ້ານ ສິດນຳຊ້ທີ່ດິນຕາມປະເພນີ, ການເຂົ້າເຖິງຂະບວນຍຸຕິທຳ ແລະ ກົດໝາຍທີ່ດິນ ແກ່ປະຊາຊົນ.

ຜ່ານການສັງເກດການຂອງຄູຝຶກໃນການຝຶກອົບຮົມຄັ້ງນີ້ໄດ້ເວົ້າວ່າ ວິທີການທີ່ໃຊ້ທີ່ໃຊ້ໄດ້ຜົນຫຼາຍໃນການຮຽນຮູ້ຂອງຜູ້ເຂົ້າຮ່ວມແມ່ນໄດ້ແກ່ ການວັດລະດັບຄວາມເຂົ້າໃຈກ່ອນ ແລະ ຫຼັງການຝຶກອົບຮົມ, ກິດຈະກຳ ດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈ (PMI), ການວິເຄາະຄວາມຕ້ອງການດ້ານຂໍ້ມູນ, ການສົນທະນາເປັນກຸ່ມ, ການວາງແຜນແບບ SMART , ສາຍນ້ຳຂອງຫຼັກສູດ ແລະ ບັນດາເກມ.

ການຝຶກອົບຮົມຄັ້ງນີ້ ແມ່ນມີບັນດາພະນັກງານພາດສະໜາມຂອງ WWF Laos ແລະ ຄູ່ຮ່ວມງານພາກລັດ ທາງພາກໃຕ້ຂອງປະເທດລາວເຂົ້າຮ່ວມ.



ບັນດາຜູ້ເຂົ້າຮ່ວມຝຶກອົບຮົມຂອງ LIFE. ພາບໂດຍ Lenol Khantamaly



ຫຼັງຈາກຝຶກອົບຮົມກັບ LIFE ແລ້ວ , ຜູ້ເຂົ້າຮ່ວມກໍ່ໄດ້ມີການນຳເອົາເຄື່ອງມືທີ່ໄດ້ຮຽນຮູ້ຈາກ LIFE tools ໄປນຳໃຊ້ໃນການເຜີຍແຜ່ ຂໍ້ມູນແກ່ປະຊາຊົນທ້ອງຖິ່ນໃນຂັ້ນບ້ານ. ພາບໂດຍ Lenol Khantamaly

**ຮຽນຮູ້ເພີ່ມເຕີມກ່ຽວກັບໂຄງການ LIFE ໄດ້ ທີ່ນີ້**

## 2. ສູນຂ່າວສານເພື່ອການຮຽນຮູ້ ແລະ ແລກປ່ຽນກ່ຽວກັບທີ່ດິນ (LILC)



ບັນດາເອກະສານຕ່າງໆກ່ຽວກັບທີ່ດິນ. ພາບໂດຍ LILC

ບັນດາການເຄື່ອນໄຫວປະຕິບັດກິດຈະກຳຂອງໂຄງການ LILC ໄດ້ສິ້ນສຸດລົງ ພາຍຫຼັງມີການເຄື່ອນໄຫວໄດ້ 1 ປີ ພາຍໃນປີ 2018 . ເຖິງແມ່ນວ່າ ການເຄື່ອນໄຫວກິດຈະກຳຕ່າງໆຂອງ LILC ຈະສິ້ນສຸດລົງ ແລ້ວກໍ່ຕາມ ແຕ່ທາງສູນ ຍັງສືບຕໍ່ສະໜອງພື້ນທີ່ໃຫ້ແກ່ຜູ້ທີ່ສົນໃຈໃຫ້ເຂົ້າມາຮຽນຮູ້ກ່ຽວກັບຂໍ້ມູນຂ່າວສານຕ່າງໆກ່ຽວກັບທີ່ດິນ. ເຊິ່ງໃນປັດຈຸບັນ ທາງສູນ LILC (ຫໍສະມຸດທີ່ດິນ) ໄດ້ມີບັນດາເອກະສານທີ່ຫຼາກຫຼາຍທີ່ກ່ຽວຂ້ອງກັບຂໍ້ມູນດ້ານທີ່ດິນ ທັງຮູບແບບເອກະສານທີ່ເປັນສະບັບ ແລລະ ເອກະສານທາງອອນລາຍ.

ສຳລັບບຸກຄົນທົ່ວໄປ ຫຼື ສະມາຊິກຂອງ LIWG ເອງກໍ່ສາມາດເຂົາໄປທີ່ສູນດັ່ງກ່າວໄດ້ ເຊິ່ງສູນ LILC ແມ່ນເປີດໃຫ້ບໍລິການ ແຕ່ວັນຈັນ - ວັນສຸກ (ເວລາ 8:30 – 16:30) ທີ່ອົງການ ບ້ານຈຸດສຸມສາກົນ (Village Focus International), ທ່ານເບິ່ງທີ່ຢູ່ສະຖານທີ່ນີ້ໄດ້ຕາມ ແຜນທີ່ນີ້.

- ປັດຈຸບັນທ່ານຍັງສາມາດຕິດຕາມຂໍ້ມູນຂ່າວສານຕ່າງໆ LILC ໄດ້ທີ່ ເຟສບຸກຂອງ LILC
- ແລະ ດາວໂລດເອກະສານຕ່າງໆກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໄດ້ໃນ ເວັບໄຊ້ຂອງ LILC

## 3. ໂຄງການ COPE ຂອງ ອົງກອນ Helvetas Laos: ຊາວກະສິກອນຜະລິດຊາລາວ ໃນເມືອງຜົ້ງສາລີ

ໂຄງການ ສ້າງຄວາມເຂັ້ມແຂງດ້ານບົດບາດຍິງ-ຊາຍ ໃຫ້ແກ່ຊຸມຊົນ (COPE) ແມ່ນພັດທະນາຂຶ້ນມາ ໂດຍອີງໃສ່ ບັນດາປະສົບການທີ່ໄດ້ຮັບ ແລະ ແນວທາງປະຕິບັດທີ່ໄດ້ຮັບຜົນສຳເລັດຈາກໂຄງການຜ່ານມາຂອງອົງກອນ Helvetas Laos.

ໂຄງການ COPE ແມ່ນ ມຸ້ງເນັ້ນໃນການສ້າງ ຄວາມເຂັ້ມແຂງໃຫ້ກັບແມ່ຍິງ (ເຊິ່ງເປັນຜູ້ທີ່ຜົນຜະລິດຊາຈຳນວນຫຼວງຫຼາຍ) ແລະ ກຸ່ມຜູ້ດ້ອຍໂອກາດ ໂດຍການເພີ່ມມູນຄ່າໃຫ້ຕ້ອງໂສ້ຂອງຊາ, ການສ້າງຄວາມອາດສາມາດຂອງຜູ້ໃຫ້ບໍລິການທ້ອງຖິ່ນ ແລະ ອຳນວຍຄວາມສະດວກການສົນທະນາໃນລະດັບນະໂຍບາຍ ເພື່ອຜັກດັນໃຫ້ເກີດມີນະໂຍ ບາຍອຳນວຍຄວາມສະດວກໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ ເຊິ່ງເຮັດໃຫ້ຊຸມຊົນທ້ອງຖິ່ນມີຄວາມພ້ອມຫຼາຍຂຶ້ນໃນການເຂົ້າໄປມີສ່ວນຮ່ວມທາງດ້ານການຕະຫຼາດ ແລະ ສາມາດປັບ ປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ. ເຊິ່ງວັດຖຸປະສົງໂດຍລວມຂອງໂຄງການ COPE ແມ່ນ 'ຜູ້ຜະລິດລາຍຍ່ອຍ ທັງຍິງ ແລະ ຊາຍ ໃນເຂດຊົນນະບົດ ມີຄວາມສາມາດໃນການປັບປຸງຜະລິດຕະພັນ ແລະ ວິຖີຊີວິດການເປັນຢູ່ ແລະ ສາມາດ ຮັບຜົນປະໂຫຍດຈາກ ການປະຕິບັດການຄ້າທີ່ເປັນທຳ.'



ກຸ່ມແມ່ຍິງເຮັດວຽກໃນໂຮງງານແປຮູບຊາ ໃນເມືອງ ຜົ້ງສາລີ, ແຂວງຜົ້ງສາລີ. ພາບໂດຍ LIWG

ໃນການໄປຢ້ຽມຢາມພື້ນຊຸມຊົນ ທີ່ໂຄງການ COPE ສະໜັບສະໜູນ ຂອງ ກອງເລຂາ LIWG ແມ່ນໄດ້ເຮັດໃຫ້ຮູ້ເຖິງເລື່ອງລາວ ແລະ ຄວາມສຳຄັນຂອງຊາ 400 ປີ ແລະ ການແລກປ່ຽນບົດຮຽນກັບຊຸມຊົນທ້ອງຖິ່ນ ທີ່ ບໍລິສັດທີ່ແປຮູບຊາໃນເມືອງຜົ້ງສາລີ. ພ້ອມນີ້ ຍັງໄດ້ເຫັນເປັນຮູບນາມມະທຳເຖິງຄວາມສຳເລັດຂອງໂຄງການໃນການສະໜັບສະໜູນຊຸມຊົນ ພ້ອມທັງຮັບຮູ້ເຖິງຄວາມທ້າທາຍຂອງການປະຕິບັດງານ ຂອງໂຄງການ COPE ກັບ ຊຸມຊົນທ້ອງຖິ່ນ, ບໍລິສັດ ແລະ ໜ່ວຍງານພາກລັດ ໃນເຂດການເຮັດວຽກຂອງເຂົາເຈົ້າ.

ຮຽນຮູ້ເພີ່ມເຕີມກ່ຽວກັບ: ໂຄງການ COPE & ຜົນສຳເລັດຂອງໂຄງການໃນປີ 2016

## 4. ອົງກອນ CCL: ຊາປ່າ ແລະ ການປູກໝາກແໜ່ງ



ສວນໝາກແໜ່ງ ໃນເມືອງ ຍອດອູ, ແຂວງຜົ້ງສາລີ . ພາບໂດຍ LIWG

ອົງການຮ່ວມມືກັບປະເທດລາວ (CCL) ແມ່ນ ອົງການຈັດຕັ້ງສາກົນຝຣັ່ງ ທີ່ບໍ່ຂຶ້ນກັບລັດຖະບານ ເຊິ່ງມີຫ້ອງການຕັ້ງຢູ່ ນະຄອນຫຼວງວຽງຈັນ, ປະເທດລາວ. ຈຸດປະສົງຫຼັກ ຂອງ CCL ແມ່ນເສີມສ້າງຄວາມເຂັ້ມແຂງໃນການພັດທະນາຊົນນະບົດ ແລະ ການປະກອບສ່ວນໃນການຊ່ວຍຫຼຸດຜ່ອນຄວາມທຸກຍາກໃນປະເທດລາວ. CCL ໄດ້ມີການດຳເນີນໂຄງການພັດທະນາຊົນນະບົດໃນພາກເໜືອເຂດເນີນສູງຂອງປະເທດລາວ ມາຕັ້ງແຕ່ປີ 1980 ເພື່ອເປັນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະ ກຸ່ມຄົນຊົນເຜົ່າ ແລະ ແມ່ຍິງໃນເຂດຊົນນະບົດ. ຕະຫຼອດໄລຍະເວລາກວ່າ 30 ປີທີ່ຜ່ານມາ CCL ໄດ້ໃຫ້ການສະໜັບສະໜູນທາງດ້ານການເງິນ ແລະ ການຝຶກອົບຮົມທາງດ້ານໂພສະນາການ, ສຸຂະພາບ ແລະ ສຸຂະພິບານ, ການແປຮູບອາຫານ, ການພັດທະນາຕ້ອງໂສ້ອາຫານ, ການປະຕິບັດກະສິກຳແບບຍືນຍົງ. ນອກນັ້ນ ນັງມີການສ້າງຄວາມອາດສາມາດ ແລະ ຄວາມສະເໝີພາບທາງດ້ານເພດ ແຕ່ບັນດາຊຸມຊົນຫຼາຍແຫ່ງ ໃນແຂວງ ຊຽງຂວາງ, ຜົ້ງສາລີ ແລະ ອຸດົມໄຊ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ.

ເພື່ອເປັນສ່ວນໜຶ່ງໃນການສ້າງຄວາມສຳພັນທີ່ດີກັບສະມາຊິກໃນຂັ້ນທ້ອງຖິ່ນ ສະນັ້ນກອງເລຂາ LIWG ໄດ້ໄປຢ້ຽມຢາມບັນດາຊຸມຊົນຕ່າງໆ ໃນເມືອງ ຍອດອູ ທີ່ທາງ ອົງກອນ CCL ໄດ້ມີການສະໜັບສະໜູນ ໂດຍສະເພາະ ແມ່ນການໄປຮຽນຮູ້ກ່ຽວກັບຄວາມສຳຄັນຂອງຊາປ່າ ແລະ ໝາກແໜ່ງ ທີ່ໄດ້ເປັນສ່ວນໜຶ່ງໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ.

ຈາກການຢ້ຽມຢາມພື້ນທີ່ ກອງເລຂາ LIWG ຍັງເຫັນໄດ້ວ່າ ມັນມີ ຄວາມທ້າທາຍ ແລະ ຫຍຸ້ງຍາກພຽງໃດໃນການເຮັດວຽກຂອງສະມາຊິກໃນຂັ້ນທ້ອງຖິ່ນ ໂດຍສະເພາະບັນຫາເລື່ອງທີ່ດິນ ແລະ ສັນຍາກະສິກຳ.

ຕິດຕາມເບິ່ງຂໍ້ມູນຂ່າວສານຈາກ CCL ໄດ້ທີ່: ເວັບໄຊ້CCL & ເຟສບຸກເພຈ CCL

# IV. ເລື່ອງເລົ່າປະຈໍາໄຕມາດ

## 1. ວັນແມ່ຍິງສາກົນ: ແມ່ຍິງມີບົດບາດແນວໃດໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ?

ເພື່ອເປັນການສັນລະເສີນບັນດາແມ່ຍິງໃນປະເທດລາວ ທີ່ທຸ້ມເທໃນການປົກປັກຮັກສາຊັບພະຍາກອນທໍາມະຊາດ, ໃນເດືອນມີນາ ເຊິ່ງເປັນເດືອນແຫ່ງແມ່ຍິງ ກອງເລຂາ ໄດ້ມີການໂອລົມກັບບາງສະມາຊິກຂອງ LIWG ກ່ຽວກັບທັດສະນະຂອງພວກເຂົາຕໍ່ກັບ ຄວາມສໍາຄັນຂອງບົດບາດແມ່ຍິງໃນການປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ການສົ່ງຕໍ່ຄວາມຮູ້ແກ່ຄົນລຸ້ນຫຼັງ ກ່ຽວກັບການປົກປັກຮັກສາຊັບພະຍາກອນທໍາມະຊາດ. ທ່ານສາມາດອ່ານບາງທັດສະນະຕໍ່ກັບເລື່ອງດັ່ງກ່າວຈາກສະມາຊິກຂອງ LIWG ໄດ້ທີ່ນີ້: ບົດບາດແມ່ຍິງໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ


ກຸ່ມແມ່ຍິງກັບມາເຮືອນຫຼັງຈາກການເຮັດວຽກຢູ່ໄຮ່ນາ, ເມືອງງອຍ, ແຂວງຫຼວງພະບາງ. ຮູບພາບໂດຍ LIWG

## 2. ບົດຄວາມ 5 ຫົວຂໍ້ ກ່ຽວກັບການຄຸ້ມຄອງທີ່ດິນໃນ ສປປ ລາວ ໂດຍ Kyoto Review of Southeast Asia

ສະຖາບັນ Center for Southeast Asian Studies ແຫ່ງ ມະຫາໄລກຽວໂຕ ໄດ້ເຜີຍແຜ່ ວາລະສານສະບັບທີ 25 ຂອງ Kyoto Review of Southeast Asia (ມີນາ 2019) ໃນຫົວຂໍ້ວ່າ "ການຄຸ້ມຄອງທີ່ດິນ ໃນ ສປປ ລາວ". ເຊິ່ງຈຸດປະສົງຂອງສະບັບນີ້ ແມ່ນໄດ້ນໍາສະເໜີ ບັນດາມຸມມອງຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນໃນປະເທດລາວ. ທ່ານສາມາດອ່ານ 5 ບົດຄວາມລຸ່ມນີ້:

1) ທັດສະນະຄວາມຄິດເຫັນຕໍ່ກັບການປ່ຽນແປງທີ່ດິນໃນປະເທດລາວ: ຈາກອໍານາດລັດແຫ່ງອະທິປະໄຕ ກ້າວໄປສູ່ ການລະດົມທຶນ, ບົດຄວາມໂດຍ ທ່ານ Ian G.Baird
2) ການຫັນປ່ຽນທີ່ດິນເປັນທຶນ ເພື່ອໃຜ?: ວິກິດການ ແລະ ທາງເລືອກຂອງການເຮັດໃຫ້ທີ່ດິນເປັນສິນຄ້າໃນປະເທດລາວ, ບົດຄວາມໂດຍ ທ່ານ Miles Kenney-Lazar
3) ຄວາມໝັ້ນຄົງທາງດ້ານພູມີສາດ: ການບີບບັງຄັບ, ຄວາມໄດ້ປຽບໃນແງ່ຂອງການປຽບທຽບ ແລະ ການບໍລິຫານປະຊາກອນໃນປະເທດລາວໃນຍຸກປະຈຸບັນ, ບົດຄວາມໂດຍ ທ່ານ Michael Dwyer
4) ທີ່ດິນ & ປ່າສ່ວນລວມ ໃນປະເທດລາວ ໃນສະຕະວັດທີ 21: ລະບົບທຶນນິຍົມການກະສິກໍາ ແລະ ຫຼັກຄໍ້າປະກັນການດໍາລົງຊີວິດ ທີ່ບໍ່ແມ່ນໃນຮູບແບບການເປັນສິນຄ້າ,ບົດຄວາມໂດຍ ທ່ານ Keith Barney ແລະ ທ່ານ Alex Van Der Meer Simo
5) ການສ້າງໂອກາດຈາກທາງຕັນ: ເສດຖະກິດຕະຫຼາດມືດຂອງແຮງງານຍ້າຍຖິ່ນຈາກເຂດຊົນນະບົດ ແລະ ກັບດັກ ໃນປະເທດລາວ, ບົດຄວາມໂດຍ ທ່ານ Kelly Wanjiang Chen

# V. ການສື່ສານ ແລະ ການແບ່ງປັນຂໍ້ມູນທາງອອນລາຍ

## 1. ການນໍາສະເໜີປະເດັນເດັ່ນໃນ ເຟຈເຟສບຸກຂອງ LIWG:

ເພື່ອນໍາສະເໜີປະເດັນເດັ່ນກ່ຽວກັບທີ່ດິນ ແລະ ສິ່ງແວດລ້ອມທີ່ເກີດໃນປະເທດລາວ ກອງເລຂາ LIWG ໄດ້ມີການອັບເດດຂໍ້ມູນຂ່າວສານຢ່າງເປັນປະຈໍາ ເພື່ອໃຫ້ຄົນລາວສາມາດຮັບຂໍ້ມູນເດັ່ນ ແລະ ສໍາຄັນກ່ຽວກັບປະເດັນທີ່ດິນ ແລະ ສິ່ງແວດລ້ອມ ທີ່ເກີດຂື້ນໃນປະເທດລາວ.

ທ່ານສາມາດຕິດຕາມຂ່າວສານໃນເຟສບຸກເພຈຂອງພວກເຮົາໄດ້ທີ່:
Land Information Working Group/ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ




## 2. ສະຫຼຸບຂ່າວເດັ່ນປະຈໍາວັນ ເວັບໄຊ້ຂອງ LIWG

ເພື່ອເປັນການສະຫຼຸບຂ່າວປະຈໍາວັນກ່ຽວກັບປະເດັນທີ່ດິນ ແລະ ສິ່ງແວດລ້ອມ ເພື່ອໃຫ້ບັນດາສະມາຊິກຂອງ LIWG ແລະ ສາທາລະນະໄດ້ຮັບຮູ້ ກອງເລຂາ LIWG ໄດ້ມີການສະຫຼຸບຂ່າວ 2 ຄັ້ງຕໍ່ອາທິດ ໂດຍການລວບລວມເອົາບັນດາຫົວຂໍ້ຂ່າວ ທັງພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ຜູ້ອ່ານສາມາດເຂົ້າເຖິງແຫ່ງຂໍ້ມູນທີ່ຫຼາກຫຼາຍ. ການສະຫຼຸບຂ່າວຂອງ LIWG ແມ່ນມີທັງ ພາສາລາວ ແລະ ພາສາອັງກິດ.
ທ່ານສາມາດເຂົ້າເບິ່ງນໍາເວັບໄຊ້ພວກເຮົາທີ່ນີ້: http://www.laolandinfo.org/blog/weekly-news-update/

### 3. ເອກະສານສະບັບໃໝ່ໃນ ຄັງເອກະສານເວັບໄຊ້ LIWG

ເພື່ອເປັນການເຜີຍແຜ່ຂໍ້ມູນ ແລະ ບົດວິໄຈຕ່າງໆກ່ຽວກັບປະເດັນທີ່ດິນໃນປະເທດລາວໃຫ້ສັງຄົມໄດ້ຮັບຮູ້ ກອງເລຂາ LIWG ໄດ້ມີການເຜີຍແຜ່ບັນດາບົດລາຍງານ ແລະ ເອກະສານຕ່າງໆກ່ຽວກັບປະເດັນທີ່ດິນໃນປະເທດລາວລົງໃນເວັບໄຊ້ ເຊິ່ງບັນດາເອກະສານຕ່າງໆແມ່ນປະກອບມີ ເອກະສານທີ່ຈັດທຳຂຶ້ນໂດຍ ກອງເລຂາ LIWG, ບັນດາສະມາຊິກ, ນັກວິໄຈ ແລະ ຄູ່ຮ່ວມງານຂອງເຄືອຂ່າຍ.

ໃນລະຫວ່າງເດືອນ ມັງກອນ - ມີນາ 2019 ໄດ້ມີການເຜີຍແຜ່ເອກະສານສຳຄັນ 2 ເອກະສານຄື:

- ຂໍ້ສະເໜີແນະຕ່າງໆ ແກ່ການປັບປຸງກົດໝາຍທີ່ດິນ ທີ່ໄດ້ມີການນຳສະເໜີ ໃນກອງປະຊຸມສະຊຸມກາງສະໄໝສາມັນໃນຄັ້ງວັນທີ 7 ພະຈິກ 2018. ທ່ານສາມາດເຂົ້າເບິ່ງບັນດາຂໍ້ສະເໜີແນະດັ່ງກ່າວໃນເວັບໄຊ້ພວກເຮົາຕາມລິ້ງນີ້: ເອກະສານເລກທີ 17
- ບົດສະຫຼຸບຫຍໍ້: ການປະເມີນກອບນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບສິ່ງແວດລ້ອມ ແລະ ທີ່ດິນ, ຊ່ອງວ່າງ ແລະ ຄວາມຕ້ອງການຂອງຜູ້ມີສ່ວນຮ່ວມໃນການລົງທຶນທາງດ້ານກະສິກຳ ໃນ ສປປລາວ. ເບິ່ງ ເອກະສານທີ່ນີ້

### 4. ແນະນຳແຫຼ່ງຂໍ້ມູນກ່ຽວກັບທີ່ດິນ:

- ເວັບໄຊ້ Lao Decide Info ແມ່ນພື້ນທີ່ແຫຼ່ງຂໍ້ມູນຂອງ ລັດຖະບານ ສປປ ລາວ ທີ່ລວບລວມຂໍ້ມູນສຳຄັນ ຈາກບັນດາຂະແໜງການດ້ານເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ກະສິກຳ ເພື່ອຊ່ວຍເກີດມີການວາງແຜນ ແລະ ຕັດສິນໃຈຢ່າງຮອບດ້ານ. ທ່ານສາມາດເຂົ້າເບິ່ງຂໍ້ມູນຂອງເວັບໄຊ້ນີ້ໄດ້ທີ່ນີ້: http://www.decide.la/en/publications

- ມູນນິທິ Heinrich Böll Foundation ເປັນສ່ວນໜຶ່ງຂອງ ຂະບວນການທາງດ້ານການເມືອງສີຂຽວ (Green political movement) ທີ່ສ້າງຂຶ້ນມາເພື່ອຕອບໂຕ້ ຕໍ່ການເມືອງ ຂອງ ສັງຄົມນິຍົມ, ເສລີນິຍົມ ແລະ ອຸນຸລັກນິຍົມ ແບບດັ້ງເດີມ. ຫຼັກການສຳຄັນຂອງ ມູນນິທິນີ້ ແມ່ນມຸ້ງເນັ້ນແນວທາງຫຼັກນິເວດວິທະຍາ ແລະ ຄວາມຍືນຍົງ, ຄວາມເປັນປະຊາທິປະໄຕ ແລະ ສິດທິມະ ນຸດ, ແລະ ການຕັດສິນໃຈດ້ວຍຕົນເອງ ແລະ ຄວາມຍຸດຕິທຳ. ມູນນິທິນີ້ແມ່ນ ເຄືອຂ່າຍກຸ່ມນັກຄິດວິຊາການສີຂຽວ (Green think tank) ແລະ ນະໂຍບາຍສາກົນ. ທ່ານສາມາດເຂົ້າເບິ່ງຄັງຂໍ້ມູນຂອງມູນນິທິນີ້ໄດ້ທີ່ນີ້: http://bit.ly/2KgwLI7

- ອົງກອນ Rights and Resources Initiative (RRI) ເປັນອົງກອນສາກົນທີ່ບໍ່ຂຶ້ນກັບລັດຖະບານ ທີ່ມີການດຳເນີນງານ ເພື່ອໃຫ້ເກີດມີ ການປະຕິຮູບການຄອບຄອງປ່າໄມ້ ແລະ ນະໂຍບາຍ ແລະ ການປ່ຽນແປງຮູບແບບເສດຖະກິດປ່າໄມ້ ເພື່ອໃຫ້ບັນດານັກທຸລະກິດໄດ້ຄຳນຶງເຖິງ ຄວາມສຳຄັນຂອງການພັດທະນາຊຸມຊົນ ແລະ ການສະໜັບສະໜູນການປັບປຸງວິຖີຊີວິດຂອງຄົນທ້ອງຖິ່ນ. ອົງກອນ RRI ແມ່ນມີການເຮັດວຽກໃນລະດັບປະເທດ, ພາກພື້ນ ແລະ ສາກົນ ໂດຍການເຮັດວຽກຮ່ວມກັບ ໜ່ວຍງານວິໄຈ ແລະ ການສະໜັບສະໜູນ ແລະ ຜັກດັນການປ່ຽນແປງດ້ານນະໂຍບາຍ. ທ່ານສາມາດດາວໂລດເອກະສານຕ່າງໆຂອງ RRI ໄດ້ທີ່ນີ້: https://rightsandresources.org/en/

- ເວັບໄຊ້ Open Development Laos (ODL) ແມ່ນລະບົບເຄືອຂ່າຍຂໍ້ມູນຂ່າວສານແບບເປີດກວ້າງ ທີ່ໃຫ້ບໍລິການຂໍ້ມູນຂ່າວສານ ແລະ ຊຸດຂໍ້ມູນຕ່າງໆກ່ຽວກັບວຽກງານພັດທະນາໃນ ສປປລາວ ເຊິ່ງປະກອບມີທັງຂໍ້ມູນເປັນພາສາອັງກິດ ແລະ ພາສາລາວ. ODL ແມ່ນໄດ້ອອກແບບໃຫ້ສອດຄ່ອງກັບມາດຕະຖານຂໍ້ມູນເປີດສາກົນ ເຊິ່ງ ODL ແມ່ນເປັນໜ່ວຍງານໜຶ່ງຂອງ Open Development Mekong. ທ່ານສາມາດເຂົ້າເບິ່ງຊຸດຂໍ້ມູນກ່ຽວກັບທີ່ດິນໄດ້ທີ່ນີ້: https://laos.opendevelopmentmekong.net/topics/land/

## ກິດຈະກຳໃນໄຕມາດໜ້າ (ເດືອນເມສາ – ມິຖຸນາ 2019)

⇒ ບົດສຶກສາ ແມ່ຍິງ ແລະ ສິດທິດ້ານທີ່ດິນ

⇒ ກອງປະຊຸມກາງສະໄໝສາມັນ (ມີການຫາລື ກົດໝາຍທີ່ດິນສະບັບປັບປຸງ) ແລະ ກອງປະຊຸມສະໄໝສາມັນຄັ້ງທີ 7 ຂອງ ສະພາແຫ່ງຊາດໃນເດືອນມິຖຸນາ 2019

⇒ ກອງປະຊຸມພັດທະນາປະຕິທິນກົດໝາຍປີ 2020

⇒ ການປັບປຸງເວັບໄຊ້ໃໝ່ ຂອງ LIWG

⇒ ກອງປະຊຸມສະມາຊິກຫຼັກ ຂອງ LIWG

⇒ ກອງປະຊຸມຂອງຄະນະຊີ້ນຳ LIWG

⇒ ການລົງຕິດຕາມຂອງທີມງານ LIFE ເພື່ອປະເມີນຄວາມເຂົ້າໃຈຂອງຊຸມໃນການຈັດຕັ້ງປ່າສະຫງວນ ຂອງອົງການ WWF Laos

**ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່:**

**ໂທ:** +85630 9815657 **ອີເມລ:** info@laolandinfo.org

**ເວັບໄຊ້:** www.laolandinfo.org **Facebook:** Land Information Working Group

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG